## ບົດທີ 18

# ຟີລິບປະກາດພະທຳໃຫ້ໄທເອທີໂອເປຍຟັງ

*ພະເຈົ້າສັ່ງຟີລິບໃຫ້ໄປຕາມທາງລົງຈາກ ກຸງເຢລູຊາເລັມໄປເມືອງຄາສາ*




ຫຼັກການຂອງຟີລິບໃນການປະກາດພະທຳໃຫ້ບຸກຄົນຟັງ.

ທີ 1. ໃຫ້ພະເຈົ້າຊົງນຳ ______________________________

ທ 2. ຈົ່ງສັງເກດຜູ້ທີ່ພ້ອມໃຈຟັງ ______________________________

ທີ 3. ໃຫ້ສ້າງຄວາມສຳພັນໄວ້ ______________________________

ທີ 4. ຈົ່ງເລີ້ມຕົ້ນກ່າວເລື່ອງທີ່ເຂົາສົນໃຈ ______________________________

ທີ 5. ເປີດໃຫ້ເຂົາປາກດ້ວຍ ______________________________

ທີ 6. ຍົກເລື່ອງທີ່ຖືກກັບພະຄຳພີ ______________________________

ທີ 7. ກ່າວເລື່ອງພະເຢຊູ ______________________________

ທີ 8. ໃຫ້ເຂົາຮັບເຊື່ອພະເຢຊູ ______________________________

ທີ 9. ໃຫ້ເຂົາໄວ້ວາງໃຈໃນພະເຢຊູຕໍ່ໄປ ______________________________

**1** ນບົດຮຽນນີ້ ເຮົາຈະຮຽນຕໍ່ເລື່ອງການຂະຫຍາຍຕົວຂອງຄຼິດສະຕະຈັກໃນແຂວງຢູດາແລະຊາມາເລຍ.

ກ. ໃນບົດທີ 17 ຟີລິບໄປປ່າວປະກາດໃນແຂວງໃດ? ______________________________

ຂ. ໃນບົດທີ 18 ນີ້ເຫັນວ່າຟີລິບໄປຕາມທາງທີ່ລົງຈາກກຸງເຢລູຊາເລັມໄປເມືອງຄາສາ. ທາງເສັ້ນນັ້ນຢູ່ແຂວງໃດ? (ເບິ່ງແຜນທີ່ກໍໄດ້) ______________________________

ຄ. ດັ່ງນັ້ນ ເຫັນວ່າຟີລິບປະກາດຂ່າວປະເສີດຂອງພະເຢຊູໃນສອງແຂວງໃດ? __________ ແລະ ______________________________

**2** ທີ່ຈິງຟີລິບຮັບໃຊ້ພະເຈົ້າໃນຫຼາຍແຫ່ງ.

ກ. ໃນ ກຈກ 6:5-7 ຢູ່ໃສ? ____________________

ຂ. ໃນ ກຈກ 8:5 ປະກາດບ່ອນໃດ? ____________________

ຄ. ໃນ ກຈກ 8:26 ປ່າວປະກາດໃນທາງໄປໃສ? ____________________

ງ. ໃນ ກຈກ 8:40 ມີຄົນພົບເພິ່ນຢູ່ເມືອງໃດ? ____________________

ຈ. ໃນ ກຈກ 8:40 ອີກ ເພິ່ນປະກາດຂ່າວປະເສີດເຖິງເມືອງໃດ? ____________________

**3** ໃນແຜນທີ່ນ້ອຍຕໍ່ໄປນີ້ ໃຫ້ທ່ານຂີດເສັ້ນຕາມທາງທີ່ຟີລິບເດີນໄປ.




**4** ກ. ເຢລູຊາເລັມຢູ່ແຂວງໃດ? ____________________

ຂ. ເມືອງຊາມາເລຍຢູ່ໃນແຂວງໃດ? ____________________

ຄ. ທາງໄປຄາສາເດ? ____________________

ງ. ອາໂຊໂຕແຂວງໃດ? ____________________

ຈ. ສຸດທ້າຍ ກາຍຊາເລຍຢູ່ແຂວງໃດ?

**5** ການຂະຫຍາຍຄຶດສະຕະຈັກໃນຍຸກນັ້ນ ອາໄສການປະກາດສອງຢ່າງຄື:

- ການປ່າວປະກາດທົ່ວໄປ
- ການເປັນພະຍານຕໍ່ບຸກຄົນ

ກ. ໃນຊາມາເລຍ ຟີລິບປະກາດທົ່ວໄປ ຫຼືຕໍ່ບຸກຄົນ? ____________________

ຂ. ໃນທາງໄປຄາສາ ປະກາດຢ່າງໃດ? ____________________

**6** ໃນບົດທີ 11 ຫຼັກສູດນີ້ ເຮົາຮຽນມາເລື່ອງຄຳເທດສະໜາຂອງພວກສາວົກ. ໃນບົດນີ້ຈະຮຽນ ເລື່ອງການເປັນພະ ຍານ ລະຫວ່າງບຸກຄົນຕໍ່ບຸກຄົນ.

ກ. ໃນກິດຈະການ 8:26:40 ເຫັນຜູ້ໃດກ່າວຄຳພະຍານ? ____________________

ຂ. ໃນກິດຈະການ 8:27 ຟີລິບກ່າວຄຳພະຍານໃຫ້ໃຜຟັງ? ____________________

❖ *ໝາຍເຫດ: ໃນສະໄໝນັ້ນ ຜູ້ຊາຍຄົນໃດທີ່ເປັນພະນັກງານຂອງພະລາຊາ ເອທີໂອເປຍ ນັ້ນຈະຕ້ອງຖືກຕອນກ່ອນທີ່ຈະເຂົ້າຮັບຕຳແໜ່ງໃນພະລາຊະວັງ. ຄຳວ່າ "ເທືອຍ" ນັ້ນ ໝາຍຄວາມວ່າເພິ່ນເປັນຄົນທີ່ຕອນໄວ້ ເພື່ອຮັບຕຳແໜ່ງໃນພະລາຊະວັງໄດ້. ບໍ່ແມ່ນກະເທືອຍ ແຕ່ເປັນຄົນຕອນຊຶ່ງມີຕຳແໜ່ງ.*

**7** ປະເທດເອທີໂອເປຍ ຢູ່ໃນທະວີບດຽວກັນກັບປະເທດເອຢິບ.




ກ. ເອທີໂອເປຍຢູ່ໃນທະວີບໃດ?

_____ ອາຟຣິກາ

_____ ອາຊີ

_____ ຢູໂລບ

ຂ. ໄທເອທີໂອເປຍນັ້ນ ເດີນທາງຈາກກຸງເຢລູຊາເລັມໄປຄາສາ ຕາມແຜນທີ່ນັ້ນ ເພິ່ນຈະໄປໃສ? (ເລືອກ)

_____ ຈາກເອທີໂອເປຍ _____ ສູ່ເອທີໂອເປຍ _____ ສູ່ຢູໂລບ

**8** ໄທເອທີໂອເປຍນັ້ນຖືກຕອນໄວ້ເພື່ອຈະໄດ້ຮັບຕຳແໜ່ງໃນພະລາຊະວັງ. ຄົນຜູ້ນີ້ເປັນຂ້າລາຊະການຊັ້ນສູງຂອງໃຜ? (ເບິ່ງ ກຈກ 8:27) ________________________________

**9** ເມື່ອຟີລິບປະກາດພະທຳຂອງພະເຈົ້າໃຫ້ໄທເອທີໂອເປຍນັ້ນຟັງ ເພິ່ນກ່າວເລື່ອງຕາມຫຼັກການທີ່ຈັດໄວ້ຢູ່ໜ້າປົກ ບົດ ທີ 18 ນີ້.

ກ. ມີຫຼັກການຈັກປະການ? ________________________________

ຂ. ໃຫ້ທ່ານຈົດຫຼັກການທຳອິດ? ________________________________

*ໃນບົດຮຽນທີ່ທ່ານຈະເອົາຄວາມພະຍາຍາມຂອງຟີລິບນີ້ ໃຊ້ເປັນຕົວຢ່າງໃນການປ່າວປະກາດພະທຳຕໍ່ບຸກຄົນ ທັງຈະ ຮຽນຮູ້ຫຼັກການ 9 ປະການ ໃນການປະກາດຢ່າງນັ້ນ.*

## 1. ໃຫ້ພະເຈົ້າຊີ້ງນຳ

**10** ໃຫ້ອ່ານ ກຈກ 8:26

ກ. ເປັນຫຍັງຟີລິບ ຈຶ່ງເດີນຕາມທາງປາດິນຊາຍທີ່ລົງໄປເມືອງຄາສາ? (ເລືອກ)

_____ ເພາະເພິ່ນຕັ້ງໃຈຢາກໄປ

_____ ເພາະມີທຸລະໃນເມືອງຄາສາ

_____ ເພາະພະເຈົ້າຊີ້ງນຳໃຫ້ໄປ

ຂ. ໃນ ກຈກ 8:29-30 ເປັນຫຍັງຟີລິບແລ່ນເຂົ້າໄປໃກ້ລົດຂອງໄທເອທີໂອເປຍນັ້ນ?

________________________________________________

**11** ກ. ໃນ ກຈກ ບົດທີ 8 ຂໍ້ໃດບອກວ່າ ມີເທວະດາຕົນໜຶ່ງຂອງພະຜູ້ເປັນເຈົ້າໄດ້ສັ່ງໃຫ້ຟີລິບໄປຕາມທາງລົງໄປເມືອງ ຄາສາ? ________________________________

ຂ. ຂໍ້ໃດທີ່ພະວິນຍານສັ່ງໃຫ້ເຂົ້າໄປຕິດກັບລົດນັ້ນ? ______________________________

**12** ມີວິທີທາງຫຼາຍຢ່າງທີ່ເຮົາຮັບຮູ້ການຊີ້ງນຳຈາກພະເຈົ້າໄດ້ຄື:

- ♦ ໃນຄວາມຝັນ
- ♦ ໂດຍການສຳນຶກໃນໃຈ
- ♦ ອາດຈະອອກສຽງປາກ

ໃນຂໍ້ 26 ນັ້ນ ຟີລິບຮັບການຊີ້ງນຳຈາກພະເຈົ້າຢ່າງໃດ? ___________________________



**13** ກ່ອນທີ່ເຮົາຈະປະກາດພະທຳແກ່ບຸກຄົນ ເຮົາຄວນຮັບການຊີ້ງນຳຈາກພະເຈົ້າ ແຕ່ວິທີທີ່ພະເຈົ້າຈະແນະນຳເຮົາໄປ ອາດຈະມີຫຼາຍຢ່າງ ຕາມຕົວຢ່າງຕ່າງ ໆ ຕໍ່ໄປນີ້:

ຕົວຢ່າງທີ 1: ຄຳຕາ ພ້ອມທີ່ຈະປະກາດຂ່າວປະເສີດຢູ່ສະເໝີ ເພາະໃນມາລະໂກ 16:15 ພະເຢຊູສັ່ງວ່າ "... ຈົ່ງໄປທົ່ວໂລກ ປະກາດຂ່າວປະເສີດແກ່ມະນຸດສະໂລກທັງໝົດ."

ຕົວຢ່າງທີ 2: ອ້ອຍ ເປັນຄຼິດສະຕຽນໃໝ່ ທີ່ບໍ່ຢາກກ່າວຄຳພະຍານເທື່ອ ເພາະຍັງບໍ່ຮູ້ຕອບເຂົາ. ມີມື້ໜຶ່ງທີ່ໝູ່ສາມຄົນ ໂຕ້ຖຽງກັນເລື່ອງສາດສະໜາ. ເພິ່ນຮູ້ຄວາມຈິງຢູ່ແລ້ວຈຶ່ງອົດບໍ່ໄດ້ເລີຍບອກເຂົາວ່າ ມີ ຕໍ່ພະເຢຊູຄຼິດຈະໃຫ້ ລອດພົ້ນຈາກບາບໄດ້.

ຕົວຢ່າງທີ 3: ຄຳ ມີເພື່ອນບ້ານທີ່ເປັນໂຈນ. ເພິ່ນຮູ້ຢູ່ວ່າ ເພື່ອນບ້ານເຫຼົ່ານັ້ນ ລັກຂອງ ຕົວະ ສໍ້ໂກງ ໆລໆ ຈຶ່ງຈະຫາເງິນໄດ້. ເມື່ອໄດ້ເງິນແລ້ວເຂົາກິນແຕ່ເຫຼົ້າ ຫຼິ້ນການພະນັນ ໆລໆ. ຄຳກໍສົງສານ ເຂົາຈຶ່ງກ່າວເລື່ອງພະເຢຊູທີ່ ຈະໃຫ້ເຂົາລອດໄດ້.

ກ. ໃນສາມຄົນນັ້ນ ແມ່ນຄົນໃດທີ່ຮັບຄຳສັ່ງສອນຈາກພະເຈົ້າທາງພະຄຳພີ? ___________

ຂ. ຄົນໃດທີ່ຮູ້ການຊີ້ງນຳຈາກພະເຈົ້າໂດຍສະຖານະການແວດລ້ອມ? _______________

ຄ. ໂອກາດທີ່ ອ້ອຍແລະຄຳ ຈະປ່າວປະກາດ ຄ້າຍຄືກັນຫຼືມີສ່ວນແຕກຕ່າງກັນ? ________

ງ. ພະເຈົ້າອາດຈະຊີ້ງນຳເຮົາໂດຍກໍລະນີແວດລ້ອມໃດໄດ້? ______________________

_______________________________________________________________

**14** ກ. ສອງຂໍ້ໃດໃນ ກິດຈະການ ບົດທີ 8 ກ່າວເລື່ອງການທີ່ພະເຈົ້າຊີ້ນຳຟີລິບ?

_____________________________ ແລະ_________________________________

ຂ. ຫຼັກການທຳອິດໃນການປ່າວປະກາດຂ່າວປະເສີດຕໍ່ບຸກຄົນຄືຫຍັງ? _______________

## 2. ຈົ່ງສັງເກດຜູ້ທີ່ພ້ອມໃຈຟັງ

**15** ໃຫ້ອ່ານ ກຈກ 8:27-28 ຂໍ້ພະຄຳພີເຫຼົ່ານັ້ນ ສະແດງວ່າໄທເອທີໂອເປຍພ້ອມທີ່ຈະຮັບຟັງຂ່າວປະເສີດ.

ກ. ເພິ່ນໄປກຸງເຢລູຊາເລັມເພື່ອຫຍັງ? _______________________________________

ຂ. ເຫັນວ່າເພິ່ນຊອກຫາຮູ້ເລື່ອງພະທຳຂອງພະເຈົ້າ ເພາະເພິ່ນກຳລັງອ່ານໜັງສືໃດ?

___________________________________________________________________

ຄ. ກຈກ 8:27-28 ສະແດງວ່າໄທເອທີໂອເປຍເຊື່ອວ່າຢ່າງໃດ? (ເລືອກ)

______ ບໍ່ມີພະເຈົ້າ ______ ບໍ່ສົນໃຈ ______ ຊອກຫາພະເຈົ້າ

**16** ໃນແຕ່ລະຂໍ້ຕໍ່ໄປນີ້ ແມ່ນຄົນໃດແດ່ທີ່ອາດຈະພ້ອມໃຈຊອກຫາພະເຈົ້າກ່ອນ? (ເລືອກ)

ກ. ______ ຄົນຂີ້ເຫຼົ້າທີ່ມາຖາມເລື່ອງອຳນາດຂອງພະເຢຊູ

ຂ. ______ ຄົນທີ່ມັກມາສົນທະນາກັບຄຼິດສະຕຽນ

ຄ. ______ ຄົນທີ່ເລີ້ມຕົ້ນອ່ານພະຄຳພີ

ງ. ______ ຄົນທີ່ຖືຕົວວ່າ ຊອບທຳແທ້

ຈ. ______ ຜູ້ໄວ້ທຸກ

**17** ບັນຫາແຕ່ເຮົາອາດຈະບໍ່ສັງເກດຄົນທີ່ພະເຈົ້າຈັດໄວ້ໃຫ້ພ້ອມໃຈຟັງ. ໃນແຕ່ລະຂໍ້ຕໍ່ໄປນີ້ ໃຫ້ທ່ານໝາຍຢ່າງນ້ອຍສອງ ຂໍ້ທີ່ອາດຈະເຮັດໃຫ້ເຮົາບໍ່ສັງເກດຄົນທີ່ພ້ອມຈະຟັງ.

ກ. ______ ເຮົາອາດຈະຢູ່ໃນສັງຄົມທີ່ມີຄວາມສຳພັນກັບພີ່ນ້ອງຄຼິດສະຕຽນ.

ຂ. ______ ເຮົາອາດຈະບໍ່ສັງເກດອາການທີ່ສະແດງວ່າເຂົາຫິວດ້ານຈິດວິນຍານ

ຄ. ______ ທີ່ເຮົາບໍ່ຄຸ້ນເຄີຍກັບບັນຫາຂອງເພື່ອນບ້ານ

ງ. ______ ທີ່ເຮົາບໍ່ເປັນຫ່ວງເຂົາ

ຈ. ______ ເຮົາອາດຈະກ້າກ່າວຄຳພະຍານ

ສ. ______ ເຮົາກ່າວພະທຳບໍ່ໄດ້ເພາະຮູ້ພະຄຳພີບໍ່ພໍ

**18** ກ. ມີຫຼັກຖານສອງປະການໃດ ທີ່ເຮົາຮູ້ວ່າໄທເອທີໂອເປຍນັ້ນ ພ້ອມທີ່ຈະຮັບເຊື່ອ?

___________________________________________________________________

___________________________________________________________________

ຂ. ສອງຂໍ້ໃດໃນ ກຈກ ບົດທີ 8 ສະແດງວ່າເພິ່ນພ້ອມໃຈຟັງ? _________ ແລະ ________

ຄ. ຫຼັກການທີສອງ ເພິ່ນຈະກ່າວຄຳພະຍານຄືຫຍັງ? ____________________________

## 3. ສ້າງຄວາມສຳພັນໄວ້

**19** ສິມຄວນທີ່ຈະສ້າງຄວາມສຳພັນກັບຜູ້ກຸ່ງວກ່ອນທີ່ຈະເລີ່ມຕົ້ນກ່າວເລື່ອງພະເຈົ້າ. ຖ້າເຂົາໄວ້ໃຈກັບເຮົາ ເຂົາຈະດີໃຈ ຟັງຄຳທີ່ເຮົາຈະກ່າວ.

ກ. ເຫັນວ່າໄທເອທີໂອເປຍໄວ້ໃຈໃນຟີລິບແລ້ວ. ໃນ ກຈກ 8:31 ເພິ່ນເຊີນຟີລິບເຮັດຫຍັງ? _

ຂ. ຟີລິບເຮັດຫຍັງຈຶ່ງຈະຈັບຄວາມສິນໃຈ? (ເລືອກ)

______ ບອກເພິ່ນວ່າເປັນຄົນບາບ

______ ບອກວ່າພະເຈົ້າຈະໃຫ້ຕົກນະຣົກ

______ ຍົກແຕ່ຄຳຖາມ

**20** ກ. ໃນ ກຈກ 8:30 ຟີລິບເປີດໂອກາດໂດຍຖາມຫຍັງ? ______________________________

ຂ. ສະແດງວ່າຢ່າງໃດ? (ເລືອກ)

______ ຟີລິບພ້ອມທີ່ຈະຕອບ

______ ບໍ່ສົນໃຈຊ່ວຍ

______ ຈະບັງຄັບໃຫ້ເຊື່ອພະເຢຊູ ເຖິງບໍ່ໄດ້ເຂົ້າໃຈກໍຕາມ

**21** ປະການໃດຕໍ່ໄປນີ້ ເປັນຕົວຢ່າງທີ່ດີໃນການສ້າງຄວາມສຳພັນກ່ອນຈະກ່າວຄຳພະຍານ?

ກ. ______ ທີ່ພະເຢຊູຂໍນ້ຳຈາກຍິງຊາວຊາມາເລຍ

ຂ. ______ ຄົນທີ່ກ່າວເລື່ອງການພິພາກສາຂອງພະເຈົ້າແກ່ຄົນທີ່ບໍ່ທັນຮູ້ດີເທື່ອ.

ຄ. ______ ຟີລິບທີ່ຖາມໄທເອທີໂອເປຍວ່າ ເຂົ້າໃຈສິ່ງທີ່ອ່ານ ຫຼືບໍ່

**22** ກ. ຟີລິບເຮັດຫຍັງເພື່ອສ້າງຄວາມສຳພັນ? ______________________________________

ຂ. ເຫັນໃນບົດແລະຂໍ້ໃດ? ______________________________________________________

ຄ. ຫຼັກການທີສາມໃນການກ່າວຄຳພະຍານຄືຫຍັງ? ______________________________

**23** ເພື່ອຈະທວນຄືນເລື່ອງຫຼັກການສາມປະການທີ່ຮຽນມາແລ້ວ. ໃຫ້ອ່ານ ກຈກ 8:26-31 ອີກ ແລະຕື່ມຄວາມທີ່ຂາດ ຕໍ່ ໄປນີ້:

ກ. ຈົ່ງໃຫ້ ______________________________ ຊົງນຳ

ຂ. ຈົ່ງ _____________ ຜູ້ທີ່ _________________ ຟັງ

ຄ. ໃຫ້ສ້າງ ________________________________ ໄວ້



## 4. ຈົ່ງສົນທະນາເລື່ອງທີ່ເພິ່ນສົນໃຈ

**24** ຫຼັກການທີ 4 ນີ້ຄືໃຫ້ສົນທະນາໃນເລື່ອງທີ່ຄົນນັ້ນສົນໃຈ ຈົ່ງຈະສວຍໂອກາດກ່າວເລື່ອງພະເຢຊູຕໍ່ໄປ.

ກ. ໃນເວລານັ້ນ ໄທເອທີໂອເປຍສົນໃຈພະທຳຢູ່. ເພິ່ນກຳລັງອ່ານຈາກພະທຳໃດ? (ເບິ່ງ ກຈກ 8:28 ກໍໄດ້) ______________________________

ຂ. ຟີລິບເລີ່ມຕົ້ນສົນທະນາເລື່ອງຫຍັງ? (ເລືອກ)

______ ພະທຳທີ່ໄທເອທີໂອເປຍກຳລັງອ່ານ

______ ພະທຳອື່ນທີ່ໄທເອທີໂອເປຍບໍ່ສົນໃຈ

______ ເລື່ອງສິ້ນສຸດແຜ່ນດິນໂລກ

ຄ. ກິດຈະການ ບົດທີ 8 ຂໍ້ໃດບອກວ່າຟີລິບຕັ້ງຕົ້ນເລົ່າແຕ່ພະທຳນັ້ນ? ______________

**25** ໃນຕົວຢ່າງ 4 ປະການຕໍ່ໄປນີ້ ປະການໃດເໝາະສົມເພື່ອຈັບຄວາມສົນໃຈ? (ເລືອກ)

ກ. ______ ທີ່ພະເຢຊູກ່າວໃຫ້ສາວົກທີ່ເຄີຍຫາປາ ໃຫ້ປະມອງໄວ້ມາຫາຄົນ

ຂ. ______ ທີ່ຈະບອກໃຫ້ຄົນທີ່ເຈັບໜັກວ່າສົມຄວນຈະອອກໄປປ່າວປະກາດພະທຳ.

ຄ. ______ ຟີລິບອະທິບາຍພະທຳທີ່ໄທເອທີໂອເປຍອ່ານໂດຍບໍ່ເຂົ້າໃຈເທື່ອ.

ງ. ______ ພະເຢຊູເຫັນຍິງຊາວຊາມາເລຍມາຕັກນ້ຳກິນ ເລີຍກ່າວເລື່ອງນ້ຳອັນປະກອບດ້ວຍຊີວິດ.

**26** ຕໍ່ໄປນີ້ມີຂໍ້ຄວາມທີ່ຈະໃຊ້ເປັນຄຳແນະນຳເລື່ອງຂ່າວປະເສີດ.

(1) ມີແຕ່ພະເຢຊູຜູ້ດຽວທີ່ເກີດມາເປັນທັງພະເຈົ້າແລະມະນຸດ ທີ່ນຳຄົນມາຫາພະເຈົ້າໄດ້.

(2) ອຳນາດຂອງພະເຢຊູປົວພະຍາດໄດ້. (ຍົກຕົວຢ່າງກໍໄດ້)

(3) ກ່າວເລື່ອງພະເຢຊູຕາຍແທນບາບຂອງເຮົາ ຈຶ່ງຍົກຜິດບາບໄດ້

(4) ພະເຢຊູຄືນຂຶ້ນຈາກຕາຍ - ກ່າວເລື່ອງຊີວິດທີ່ບໍ່ສິ້ນສຸດຈັກເທື່ອ.

(5) ພະເຢຊູເປັນອາຫານທິບແຫ່ງຊີວິດ.

(6) ພະເຢຊູມອບຄວາມສະຫງົບສຸກໄວ້ ຢ່າງທີ່ໂລກບໍ່ມີ.

ກ. ຖ້າທ່ານຈະກ່າວເລື່ອງພະເຈົ້າໃຫ້ຜູ້ທີ່ໄວ້ທຸກຍ້ອນພີ່ນ້ອງຕາຍ. ທ່ານເຫັນວ່າເໝາະສົມທີ່ຈະໃຊ້ຄຳແນະນຳໃດ? ______________________________

ຂ. ຖ້າຈະກ່າວກັບຄົນທີ່ເຈັບ ອາດຈະແນະນຳໂດຍໃຊ້ຂໍ້ໃດ? ______________

ຄ. ຖ້າມີຄົນທີ່ສົນໃຈເລື່ອງວັນລຶດສະມາດເດ? ______________________

ງ. ຄົນທີ່ຕິວ່າ ໃນໂລກນີ້ມີແຕ່ສົງຄາມແລະຄວາມຮຸນແຮງ? ______________

ຈ. ຜູ້ທີ່ສຳນຶກຜິດບາບໜັກນ່ວງຈົນກວ່ານອນບໍ່ຫຼັບ? ____________________

ສ. ຄົນທີ່ໄປຊື້ອາຫານຢູ່ຕະຫຼາດ? ______________________________

**27** ກ. ເມື່ອຟີລິບພົບໄທເອທີໂອເປຍ ເພິ່ນສົນໃຈຫຍັງ? ____________________

ຂ. ໃນ ກຈກ 8:35 ຟີລິບຕັ້ງຕົ້ນເລົ່າເລື່ອງຫຍັງ? ______________________

ຄ. ໃຫ້ທ່ານຈົດຫຼັກການທີ 4 ໃນການກ່າວພະທຳໃຫ້ບຸກຄົນໃດຟັງ? ________________

## 5. ເປີດໃຫ້ເຂົາປາກດ້ວຍ

**28** ມີບາງຄົນທີ່ຕັ້ງໃຈວ່າຈະກ່າວເລື່ອງຂ່າວປະເສີດໃຫ້ຜູ້ອື່ນ ແຕ່ເຂົາເວົ້າບໍ່ເຊົາຈັກເທື່ອ. ຖ້າຈະສົນທະນາແທ້ ສົມຄວນ ທີ່ ຈະປາກແດ່ແລະໃຫ້ຜູ້ອື່ນປາກດ້ວຍ. ການສົນທະນາຂອງຟີລິບແລະໄທເອທີໂອເປຍເປັນຢ່າງໃດ? (ເລືອກ)

ກ. ______ ມີແຕ່ຟີລິບປາກຜູ້ດຽວ

ຂ. ______ ມີແຕ່ໄທເອທີໂອເປຍປາກຜູ້ດຽວ

ຄ. ______ ປາກທັງສອງ

ງ. ______ ບໍ່ປາກທັງສອງ

**29** ໃນການເທດສະໜາ ສ່ວນຫຼາຍມີແຕ່ນັກເທດປາກ ແຕ່ເມື່ອຈະກ່າວຄຳພະຍານຕໍ່ບຸກຄົນ ສົມຄວນທີ່ຈະຟັງຄວາມຄິດ ເຫັນຂອງເພິ່ນດ້ວຍ.

ກ. ໃນ ກຈກ 8:30 ຜູ້ໃດປາກ? ________________________________________

ຂ. ໃນ ກຈກ 8:31 ໃຜປາກ? ________________________________________

ຄ. ໃນ ຂໍ້ 34 ເດ? ________________________________________________

ງ. ຂໍ້ 35? _____________________________________________________

ຈ. ໃຜເປັນຜູ້ປາກໃນຂໍ້ 36? ________________________________________

**30** ໃຫ້ທ່ານເປີດອ່ານໃນພະທຳໂຢຮັນ ບົດທີ 4 ແລ້ວຊີ້ບອກຂໍ້ໃດທີ່ພະເຢຊູປາກ ຂໍ້ທີ່ຜູ້ຍິງປາກ ແລະຂໍ້ທີ່ປາກທັງສອງ.

ຂໍ້ 9__________________________ ຂໍ້ 17 __________________________

ຂໍ້ 10 _________________________ ຂໍ້ 19 __________________________

ຂໍ້ 11 _________________________ ຂໍ້ 21__________________________

ຂໍ້ 13 _________________________ ຂໍ້ 25__________________________

ຂໍ້ 15 _________________________ ຂໍ້ 26__________________________

ຂໍ້ 16 _________________________

**31** ຜູ້ທີ່ຈະເປັນພະຍານບາງຄົນອາດຈະຕິວ່າ ຄົນຜູ້ອື່ນນັ້ນຍາດເວົ້າຢູ່ສະເໝີຈົນກວ່າຈະກ່າວພະທຳບໍ່ສຸດຈັກເທື່ອ.

ກ. ເປັນຫຍັງຜູ້ຟັງນັ້ນ ຈິ່ງຍາດເວົ້າ? (ເລືອກ)

______ ບໍ່ສົນໃຈໃນພະທຳ

______ ຜູ້ປະກາດນັ້ນບໍ່ເປີດໂອກາດໃຫ້ຖາມ

______ ເພິ່ນເອງຢາກປະກາດພະທຳ

ຂ. ສົມຄວນທີ່ຈະໃຫ້ຜູ້ອື່ນນັ້ນເຮັດຫຍັງ? _______________________________

## 6. ຍົກເລື່ອງທີ່ຖືກກັບພະຄຳພີ

**32** ໃນກຈກ 8:35 ຟີລິບເອົາຫຍັງເປັນພື້ນຖານ? (ເລືອກ)

ກ. ______ ຂ່າວທີ່ຜູ້ອື່ນມາກ່າວກ່ອນ

ຂ. ______ ພະທຳຂອງພະເຈົ້າ

ຄ. ______ ຄວາມຄິດເຫັນຂອງຕົວເອງ

**33** ຟີລິບບໍ່ຮູ້ກ່ອນຊຶ່ງໄທເອທີໂອເປຍຈະຖາມ ແຕ່ເຖິງຢ່າງໃດກໍຕາມເພິ່ນສາມາດຕອບທັນທີເລື່ອງທີ່ຖາມມາ. ເປັນ ຫຍັງເພິ່ນຈຶ່ງຮູ້ຕອບ? (ເລືອກ)

ກ. ______ ເພິ່ນມີປຶ້ມແນະນຳກ່ຽວກັບພະຄຳພີມາພ້ອມ

ຂ. ______ ເພິ່ນກັບໄປປຶກສາກັບພວກສາວົກໃນກຸງເຢລູຊາເລັມ

ຄ. ______ ເພິ່ນຮຽນຮູ້ພະຄຳພີໄວ້ກ່ອນ

**34** ໃຫ້ອ່ານ 1 ເປໂຕ 3:15 ຂໍ້ນັ້ນບອກວ່າ ພວກເຮົາຈຶ່ງມີໃຈ __________ ຢູ່ສະເໝີ ເພື່ອຈະສາມາດຕອບແກ້ຕົວໄດ້ ຕໍ່ ບຸກຄົນທີ່ຖາມເລື່ອງຄວາມຫວັງເຮົາ. (ຕື່ມຄວາມທີ່ຂາດ)

**35** ເຮົາຄວນເຮັດຢ່າງໃດ ເພື່ອຕຽມຕົວກ່ອນຫາກມີຄົນມາຖາມເລື່ອງຄວາມເຊື່ອເຮົາ? (ເລືອກຂໍ້ດຽວ)




ກ. ______ ຮຽນພະຄຳພີຢູ່ສະເໝີ

ຂ. ______ ຟັງຄຳເຕືອນຂອງພວກເຖົ້າແກ່ຢູ່ສະເໝີ

ຄ. ______ ຟັງນັກເທດຢູ່ສະເໝີ

**36** ກ. ໃຫ້ຈົດຫຼັກການທີ 6 ໃນການປະກາດພະທຳຕໍ່ບຸກຄົນ? ______________________

ຂ. ໃຫ້ທ່ານຍົກຄວາມຈາກ ກຈກ 8:35 ທີ່ສະແດງວ່າ ຟີລິບເຮັດຖືກກັບຫຼັກການນີ້? _____

______________________________________________________________

**37** ທວນຄືນກ່ອນ

ກ. ຕາມຫຼັກການທີ 4 ເທື່ອໃດທີ່ເຮົາຈະກ່າວເລື່ອງຂ່າວປະເສີດໃຫ້ແກ່ບຸກຄົນ ເຮົາຄວນເລີ້ມຕົ້ນຢ່າງໃດ? ______________________________________________

ຂ. ຕາມຫຼັກການທີ 5 ເຮົາຄວນເປີດໂອກາດຢ່າງໃດ? ________________________

ຄ. ແລ້ວຕາມຫຼັກການທີ 6 ນີ້ ເຮົາຄວນເອົາຫຍັງເປັນພື້ນຖານ? __________________

## 7. ກ່າວເລື່ອງພະເຢຊູ

**38** ຟີລິບຍົກຕອນພະຄຳພີທີ່ໄທເອທີໂອເປຍອ່ານຢູ່ ແຕ່ໃນທັນໃດນັ້ນ ເພິ່ນປະກາດຂ່າວປະເສີດເລື່ອງໃຜ? ______________________________________________________

**39** ຖ້າເຮົາກ່າວເລື່ອງພະຄຳພີ ແຕ່ບໍ່ກ່າວຂ່າວປະເສີດເລື່ອງພະເຍຊູເທື່ອ ຄຳປະກາດຂອງເຮົາບໍ່ສຳເລັດ. ຄຳໃດຕໍ່ໄປ ນີ້ ກ່າວເລື່ອງພະເຍຊູຢ່າງບໍລິບູນ? (ເລືອກ)

ກ. ______ "ພະຄຳພີເປັນໜັງສືບູຮານ ທີ່ແປເປັນຫຼາຍຮ້ອຍພາສາແລ້ວ."

ຂ. ______ "ຂ້ອຍມັກອ່ານຈາກພະຄຳພີເດີມ ເພາະຈະໄດ້ຮຽນຮູ້ເລື່ອງສະຕິປັນຍາຂອງນັກປາດໃນສະໄໝນັ້ນ."

ຄ. ______ "ເລື່ອງສຳຄັນທີ່ສຸດໃນພະຄຳພີຄືເລື່ອງພະເຍຊູທີ່ຍົກຜິດບາບໃຫ້ຫາຍໄປໄດ້."

**40** ກ. ຖ້າເຮົາຈະປະກາດພະທຳຂອງພະອົງໃຫ້ເຂົາຟັງ ຈຳເປັນຕ້ອງກ່າວເລື່ອງໃຜ? ________

ຂ. ໃຫ້ທ່ານຍົກຄວາມຈາກ ກຈກ 8:35 ທີ່ສະແດງວ່າຟີລິບກ່າວຢ່າງນັ້ນ? ____________

______________________________________________________________

**41** ໃຫ້ທ່ານຈົດຫຼັກການທີ 7 ໃນການປະກາດພະທຳໃຫ້ບຸກຄົນຟັງ? __________________

## 8. ໃຫ້ເຂົາຮັບເຊື່ອພະເຍຊູ

**42** ທ່ານຈຳເປັນຕ້ອງມີເປົ້າໝາຍຢ່າງຊັດເຈນໃນການປ່າວປະກາດ. ຄົນໃດບໍ່ມີເປົ້າໝາຍຈະບໍ່ຖືກຕາມເປົ້າໝາຍຈັກ ເທື່ອ. ຟີລິບມີເປົ້າໝາຍຢ່າງໃດ? (ເລືອກ)

ກ. ______ ໃຫ້ໄທເອທີໂອເປຍເປັນເພື່ອນກັນຢ່າງໃກ້ສິດ

ຂ. ______ ໃຫ້ເພິ່ນຮຽນຮູ້ເລື່ອງໃນພະຄຳພີ

ຄ. ______ ໃຫ້ເພິ່ນຮັບຮູ້ພະເຍຊູ ເປັນພະຜູ້ຊ່ວຍ

**43** ການຮັບຮູ້ພະເຍຊູວ່າເປັນພະຜູ້ຊ່ວຍ ເປັນສິ່ງທີ່ຢູ່ຂ້າງໃນຈິດໃຈທີ່ຕາບໍ່ເຫັນ.

ກ. ໃນ ກຈກ 8:37 ໄທເອທີໂອເປຍຕອບຢ່າງໃດຈຶ່ງສະແດງວ່າເພິ່ນຮັບເຊື່ອພະເຍຊູແລ້ວ?

______________________________________________________________

ຂ. ໃນ ກຈກ 8:38 ເພິ່ນສະແດງຄວາມເຊື່ອຢ່າງເປີດເຜີຍໂດຍຮັບສິນຫຍັງ? __________

**44** ຕະຫຼອດທົ່ວໄປໃນພະຄຳພີໃໝ່ ຄົນທີ່ຮັບເຊື່ອພະເຍຊູເຄີຍສະແດງຄວາມເຊື່ອນັ້ນໂດຍເຮັດຫຍັງ? ______________________________________________________

**45** ການຊັກຊວນໃຫ້ຄົນຮັບເຊື່ອໃນພະເຍຊູເປັນເປົ້າໝາຍໃນການປະກາດພະທຳ.

ກ. ຂໍ້ໃດໃນກິດຈະການ ບົດທີ 8 ທີ່ໄທເອທີໂອເປຍຮັບກັບປາກວ່າເພິ່ນເຊື່ອໃນພະເຍຊູ? __

ຂ. ເປົ້າໝາຍຂອງຟີລິບສຳເລັດບໍ່? ____________________________________

ຄ. ໄທເອທີໂອເປຍຮັບສິນໃດທີ່ສະແດງຢ່າງເປີດເຜີຍວ່າເພິ່ນຮັບເຊື່ອໃນພະເຍຊູ? ______

## 9. ໃຫ້ເຂົາໄວ້ວາງໃຈກັບພະເຢຊູຕໍ່ໄປ

**46** ໃຫ້ກັບໄປອ່ານຫຼັກການທີ 9 ນັ້ນອີກສອງຫຼືສາມເທື່ອ. ຖ້າທ່ານເປັນຜູ້ປະກາດພະທຳ ຢ່າຊູ່ໃຫ້ຜູ້ທີ່ຮັບເຊື່ອໃນພະເຢຊູ ອາໄສເພິ່ງທ່ານເອງຕໍ່ໄປ ແຕ່ໃຫ້ໄວ້ວາງໃຈກັບພະເຢຊູຜູ້ດຽວ. ໃນຂໍ້ 39 ມີຫຼັກຖານໃດທີ່ສະແດງວ່າເພິ່ນໄວ້ວາງ ໃຈ ກັບພະເຈົ້າແທນທີ່ຈະໄວ້ວາງໃຈກັບຟີລິບ? (ເລືອກ)

ກ. ______ ຫຼັງຈາກຟີລິບຫາຍໄປແລ້ວ ເພິ່ນວຸ້ນວາຍຫຼາຍ

ຂ. ______ ເມື່ອບໍ່ເຫັນຟີລິບອີກ ເພິ່ນເດີນທາງຕໍ່ໄປດ້ວຍຄວາມຊົມຊື່ນຍິນດີ.

ຄ. ______ ເພິ່ນຂໍໃຫ້ຟີລິບລໍຖ້າສອນເພິ່ນກ່ອນຈະໄປ

**47** ບໍ່ແມ່ນວ່າ ຜູ້ປະກາດພະທຳຄວນຈະໜີປະຄົນທີ່ເຊື່ອໃໝ່. ຄວນສອນເຂົາແລະອົບຮົມເຂົາບໍ່ໃຫ້ອີງອາໄສເພິ່ງຜູ້ປະ ກາດ ແຕ່ໃຫ້ອີງອາໄສໃຜ? ______________________________

**48** ກ. ຕາມ ຂໍ້ 39 ເຫັນມີຫຼັກຖານໃດວ່າໄທເອທີໂອເປຍນັ້ນ ບໍ່ໄດ້ເພິ່ງອາໄສຟີລິບ ແຕ່ໄວ້ວາງໃຈກັບພະເຢຊູຕໍ່ໄປ?______________________________

ຂ. ຫຼັກການສຸດທ້າຍໃນການປະກາດຂ່າວປະເສີດໃຫ້ບຸກຄົນຄືຫຍັງ? (ຕື່ມຄວາມທີ່ຂາດ) ໃຫ້ເຂົາ ______________________________ ກັບ ________________________ ຕໍ່ໄປ.

**49** ກ. ໃນຫຼັກການທີ 7 ເຮົາຕ້ອງກ່າວເລື່ອງໃຜ? ______________________________

ຂ. ໃນຫຼັກການທີ 8 ມີເປົ້າໝາຍວ່າຈະໃຫ້ເຂົາຮັບຫຍັງ? __________________________

ຄ. ຕາມຫຼັກການທີ 9 ໃນ ກຈກ 8:39-40 ເຮົາຄວນບໍ່ໃຫ້ເຂົາໄວ້ວາງໃຈກັບເຮົາເອງແຕ່ໃຫ້ໄວ້ວາງໃຈກັບໃຜ? ______________________________

**50** ໃຫ້ທ່ານກັບໄປເປີດເບິ່ງໜ້າປົກບົດທີ 18 ນີ້ ແລ້ວຂຽນຂໍ້ຕ່າງ ໆ ທີ່ເຂົ້າກັບຫຼັກການແຕ່ລະປະການໃສ່ເສັ້ນຂ້າງຂວາ.

**51** ຂໍ້ພະຄຳພີຕໍ່ໄປນີ້ເປັນທີ່ຍົກມາຈາກ ກຈກ ບົດທີ 8 ເລື່ອງໄທເອທີໂອເປຍ. ໃຫ້ທ່ານອ່ານພະຄຳພີຢູ່ຂ້າງຊ້າຍ ແລ້ວ ຂຽນຫຼັກການທີ່ເຂົ້າກັບຂໍ້ພະຄຳພີຢູ່ຂ້າງຂວາ.

ກ. “ເທວະດາຕົນໜຶ່ງຂອງອົງພະຜູ້ເປັນເຈົ້າໄດ້ສັ່ງຟີລິບວ່າ...” (ຂໍ້ 26)
“ພະວິນຍານສັ່ງຟີລິບວ່າ...” (ຂໍ້ 29) ______________________________

ຂ. “ມາເຖິງກຸງເຢລູຊາເລັມເພື່ອນະມັດສະການ” (ຂໍ້ 27)
“ອ່ານໜັງສືຂອງເອຊາຢາ... ຢູ່” (ຂໍ້ 28) ______________________________

ຄ. “ຊຶ່ງທ່ານອ່ານນັ້ນທ່ານເຂົ້າໃຈຫຼື” (ຂໍ້ 30) ______________________________

ງ. “ຕັ້ງຕົ້ນເລົ່າແຕ່ພະທຳ” (ຂໍ້ 35) ______________________________

ຈ. “ຟີລິບວ່າ” “ໄທເອທີໂອເປຍວ່າ” (ໃນຫຼາຍຂໍ້) ______________________________

ສ. “ຕັ້ງຕົ້ນເວົ້າແຕ່ພະທຳ” (ຂໍ້ 35 ອີກ) ______________________________

ຊ. “ປະກາດຂ່າວປະເສີດເລື່ອງພະເຢຊູ” (ຂໍ້ 35) ______________________________

ຍ. "ເຮົາເຊື່ອວ່າພະເຢຊູຄຣິດຊົງເປັນພະບຸດຂອງພະເຈົ້າ" (ຂໍ້ 36)
"ຟີລິບຈຶ່ງໃຫ້ທ່ານຮັບບັບຕິສະມາ"(ຂໍ້ 38) ________________________________

ດ. "ພະວິນຍານ... ຊົງຮັບເອົາຟີລິບໄປ... ເພິ່ນບໍ່ເຫັນຟີລິບ
ຕໍ່ໄປອີກ ຈຶ່ງເດີນທາງຕໍ່ໄປດ້ວຍຄວາມຊົມຊື່ນຍິນດີ." (ຂໍ້ 39) __________________

*ໃຫ້ເສັງບົດທີ 18!*

**ຄຳຕອບ:**

**1** *ກ. ຊາມາເລຍ ຂ. ຢູດາ ຄ. ຊາມາເລຍ ແລະ ຢູດາ*

**2** *ກ. ເຢລູຊາເລັມ ຂ. ຊາມາເລຍ ຄ. ຄາສາ ງ. ອາໂຊໂຕ ຈ. ກາຍຊາເລຍ*

**3** *ເຢລູຊາເລັມ ຊາມາເລຍ ທາງໄປຄາສາ ອາໂຊໂຕ ແລະ ກາຍຊາເລຍ*

**4** *ກ. ຢູດາ ຂ. ຊາມາເລຍ ຄ. ຢູດາ ງ. ຢູດາ ຈ. ຊາມາເລຍ*

**5** *ກ. ທົ່ວໄປ ຂ. ຕໍ່ບຸກຄົນ*

**6** *ກ. ຟີລິບ ຂ. ໄທເອທີໂອເປຍຄົນໜຶ່ງ*

**7** *ກ. ອາຟະລິກກາ ຂ. ສູ່ເອທີໂອເປຍ*

**8** *ກັນດາເກ (ລາຊິນີຂອງເອທີໂອເປຍ)*

**9** *ກ. 9 ປະການ ຂ. ໃຫ້ພະເຈາຊົງນຳ*

**10** *ກ. ເພາະພະເຈາຊົງນຳໃຫ້ໄປ ຂ. ພະວິນຍານສັ່ງຢ່າງນັ້ນ*

**11** *ກ. ຂໍ້ 26 ຂ. ຂໍ້ 29*

**12** *ເທວະດາຂອງພະເຈາມາສັ່ງໄວ້*

**13** *ກ. ຄຳຕາ ຂ. ອ້ອຍ ແລະ ຄຳ ຄ. ຕ່າງກັນ*
*ງ. ບໍ່ມີຄຳຕອບຕາຍຕົວ ໃຫ້ແລກປ່ຽນຄວາມຄິດເຫັນກັບໝູ່ໃນປະຊຸມ.*

**14** *ກ. 26 ແລະ 29 ຂ. ໃຫ້ພະເຈາຊົງນຳ*

**15** *ກ. ນະມັດສະການ ຂ. ພະທຳເອຊາຢາ ຄ. ຊອກຫາພະເຈາ*

**16** *ກ ຂ ຄ ສ ຖືກ*

**17** *(ບໍ່ມີຄຳຕອບທີ່ຖືກຕາຍຕົວ ໃຫ້ແລກປ່ຽນຄວາມຄິດເຫັນໃນປະຊຸມ)*

**18** *ກ. ເພິ່ນໄປນະມັດສະການພະເຈາໃນກຸງເຢລູຊາເລັມມາ*
*ເພິ່ນອ່ານໜັງສືຂອງເອຊາຢາຜູ້ປະກາດພະທຳຢູ່*
*ຂ. ຂໍ້ 27 ແລະ 28*
*ຄ. ຈົ່ງສັງເກດຜູ້ທີ່ພ້ອມໃຈຟັງ*

**19** *ກ. ຂຶ້ນນັ່ງລົດນຳ ຂ. ຍົກແຕ່ຄຳຖາມ*

**20** *ກ. ຊຶ່ງທ່ານອ່ານນັ້ນ ທ່ານເຂົາໃຈຫຼື? ຂ. ຟີລິບພ້ອມທີ່ຈະຕອບ*

**21** *ກ ຄ ຖືກ*

**22** *ກ. ຍົກຖາມສິ່ງທີ່ຕອບໄດ້ ຂ. ກຈກ 8:30 ຄ. ສ້າງຄວາມສຳພັນ*

**ຄຳຕອບ (ຕໍ່):**

**23** *ກ. ພະເຈົ້າ ຂ. ສັງເກດ... ພ້ອມໃຈ ຄ. ຄວາມສຳພັນ*

**24** *ກ. ເອຊາຢາ ຂ. ພະທຳທີ່ໄທເອທີໂອເປຍກຳລັງອ່ານ ຄ. ຂໍ້ 35*

**25** *ກ ຄ ງ ຖືກ*

**26** *ກ. (4) ຂ. (2) ຄ. (1) ງ. (6) ຈ. (3) ສ. (5)*

**27** *ກ. ພະທຳເອຊາຢາ ຂ. ກ່າວແຕ່ພະທຳຕອນນັ້ນ*
*ຄ. ຈຶ່ງເລີ້ມຕົ້ນກ່າວເລື່ອງທີ່ເຂົາສົນໃຈ*

**28** *ຄ ຖືກ*

**29** *ກ. ຟີລິບ ຂ. ໄທເອທີໂອເປຍ ຄ. ໄທເອທີໂອເປຍ ງ. ຟີລິບ*
*ຈ. ໄທເອທີໂອເປຍ*

**30** *ຂໍ້ 9 ຜູ້ຍິງ ຂໍ້ 10 ພະເຢຊູ ຂໍ້ 11 ຜູ້ຍິງ ຂໍ້ 13 ພະເຢຊູ ຂໍ້ 15 ຜູ້ຍິງ*
*ຂໍ້ 16 ພະເຢຊູ ຂໍ້ 17 ທັງສອງ ຂໍ້ 19 ຜູ້ຍິງ ຂໍ້ 21 ພະເຢຊູ ຂໍ້ 25 ຜູ້ຍິງ*
*ຂໍ້ 26 ພະເຢຊູ*

**31** *ກ. ຜູ້ປະກາດນັ້ນບໍ່ເປີດໂອກາດໃຫ້ຖາມ ຂ. ໃຫ້ເຂົາປາກດ້ວຍ*

**32** *ຂ ຖືກ*

**33** *ຄ ຖືກ*

**34** *ພ້ອມ*

**35** *ກ ຖືກ*

**36** *ກ. ຍົກເລື່ອງທີ່ຖືກກັບພະຄຳພີ ຂ. ເລົ່າແຕ່ພະຄຳ*

**37** *ກ. ກ່າວເລື່ອງທີ່ເຂົາສົນໃຈ ຂ. ເປີດໂອກາດໃຫ້ເຂົາປາກດ້ວຍ ຄ. ພະຄຳພີ*

**38** *ພະເຢຊູ*

**39** *ຄ ຖືກ*

**40** *ກ. ພະເຢຊູ ຂ. "ຈຶ່ງປະກາດຂ່າວປະເສີດເລື່ອງພະເຢຊູໃຫ້ທ່ານຟັງ"*

**41** *ກ່າວເລື່ອງພະເຢຊູ*

**42** *ຄ ຖືກ*

**43** *ກ. "ເຮົາເຊື່ອວ່າພະເຢຊູຄຣິດຊົງເປັນພະບຸດຂອງພະເຈົ້າ" ຂ. ຮັບບັບຕິສະມາ*

**44** *ຮັບບັບຕິສະມາ*

**45** *ກ. ຂໍ້ 37 ຂ. ສຳເລັດ ຄ. ຮັບບັບຕິສະມາ*

**46** *ຂ ຖືກ*

**47** *ພະເຢຊູ*

**48** *ກ. ເຖິງບໍ່ໄດ້ເຫັນຟີລິບຕໍ່ໄປອີກກໍຕາມ ແຕ່ເພິ່ນເດີນທາງຕໍ່ໄປດ້ວຍຄວາມຊົມຊື່ນຍິນດີ.*
*ຂ. ໄວ້ວາງໃຈ... ພະເຢຊູ*

**49** *ກ. ພະເຢຊູ ຂ. ຮັບເຊື່ອພະເຢຊູ ຄ. ພະເຢຊູ*

**ຄຳຕອບ (ຕໍ່):**

**50** *ທີ 1 ຂໍ້ 26 ແລະ 29* *ທີ 2 ຂໍ້ 27 ແລະ 28*

*ທີ 3 ຂໍ້ 30* *ທີ 4 ຂໍ້ 35*

*ທີ 5 ຂໍ້ 30, 31, 34, 35 ໆລໆ* *ທີ 6 ຂໍ້ 35*

*ທີ 7 ຂໍ້ 35* *ທີ 8 ຂໍ້ 37 ແລະ 38*

*ທີ 9 ຂໍ້ 39*

**51** *ກ. ໃຫ້ພະເຈົ້ານຳ ຂ. ຈົ່ງສັງເກດຜູ້ທີ່ພ້ອມໃຈຟັງ ຄ. ໃຫ້ສ້າງຄວາມສຳພັນໄວ້*

*ງ. ຈົ່ງເລີ່ມຕົ້ນກ່າວເລື່ອງທີ່ເຂົາສົນໃຈ ຈ. ເປີດໂອກາດໃຫ້ເຂົາປາກດ້ວຍ*

*ສ. ຍົກເລື່ອງທີ່ຖືກກັບພະຄຳພີ ຊ. ກ່າວເລື່ອງພະເຢຊູ ຍ. ໃຫ້ເຂົາຮັບເຊື່ອພະເຢຊູ*

*ດ. ໃຫ້ເຂົາໄວ້ວາງໃຈໃນພະເຢຊູຕໍ່ໄປ*